**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

---

ຫ້ອງວ່າການລັດຖະບານ

ເລກທີ 457/ຫລບ.ກລຂ.

ນະຄອນຫຼວງວຽງຈັນ, ວັນທີ 3 . 4 . 2014

## <u>ແຈ້ງການ</u>

ຮຽນ : - ບັນດາທ່ານລັດຖະມົນຕີວ່າການກະຊວງ, ຫົວໜ້າອົງການທຽບເທົ່າ.
- ທ່ານເຈົ້າຄອງນະຄອນຫຼວງວຽງຈັນ ແລະ ບັນດາທ່ານເຈົ້າແຂວງ ໃນທົ່ວປະເທດ.
- ບັນດາທ່ານຫົວໜ້າອົງການຈັດຕັ້ງມະຫາຊົນ ອ້ອມຂ້າງສູນກາງ.

ເລື່ອງ: ຈິດໃຈການຈັດຕັ້ງສະເຫຼີມສະຫຼອງ ວັນບຸນປີໃໝ່ລາວ ປະຈຳ ພສ 2557

- ອີງຕາມມາດຕາ 19 ຂອງກົດໝາຍວ່າດ້ວຍແຮງງານ ສະບັບເລກທີ 06/ສພຊ, ລົງວັນທີ 27 ທັນວາ 2006 ກ່ຽວກັບວັນພັກທາງລັດຖະການ.

- ອີງຕາມຜົນຂອງກອງປະຊຸມຮ່ວມ ຂອງບັນດາກະຊວງ-ອົງການອ້ອມຂ້າງລັດຖະບານ ຄັ້ງວັນທີ 17 ມີນາ 2014

- ອີງຕາມການຕົກລົງ ແລະ ຊີ້ນຳຂອງທ່ານນາຍົກລັດຖະມົນຕີ ໃນວັນທີ 31ມີນາ 2014.

ຫ້ອງວ່າການລັດຖະບານ ຂໍຖືເປັນກຽດແຈ້ງມາຍັງບັນດາທ່ານລັດຖະມົນຕີວ່າການ-ຫົວໜ້າອົງການທຽບເທົ່າ, ທ່ານເຈົ້າຄອງນະຄອນຫຼວງວຽງຈັນ, ບັນດາທ່ານເຈົ້າແຂວງ, ບັນດາທ່ານຫົວໜ້າອົງການຈັດຕັ້ງມະຫາຊົນ, ພະນັກງານ-ລັດຖະກອນ, ທະຫານ, ຕຳຫຼວດ ແລະ ປະ ຊາຊົນບັນດາເຜົ່າໃນທົ່ວປະເທດ ດັ່ງນີ້ :

" 1. **ໃຫ້ສະເຫຼີມສະຫຼອງບຸນປີໃໝ່ປະຈຳຊາດ ປະຈຳ ພສ 2557 ທີ່ໝູນວຽນມາອີກວາລະໜຶ່ງ ໃນລະຫວ່າງວັນທີ 14-16 ເມສາ 2014 ດ້ວຍຈິດໃຈເຮັດແນວໃດ ໃຫ້ງານບຸນປະເພນີປະຈຳຊາດນີ້ ມີບັນຍາກາດເບີກບານມ່ວນຊື່ນ, ສ້າງສັນສາມັກຄີ, ເສີມສ້າງເສດຖະກິດ-ວັດທະນະທຳ ແລະ ປະເພນີອັນດີງາມຂອງຊາດລາວເຮົາ** ເປັນຕົ້ນແມ່ນ : ການບາສີສູ່ຂວັນອວຍພອນໄຊ, ການຫົດສົງນ້ຳພະພຸດທະຮູບ, ການຕັກບາດຖະຫວາຍສັງຄະທານແກ່ພະສົງອົງຄະເຈົ້າ ; ການຢ້ຽມຢາມຍາດຕິພີ່ນ້ອງ, ພະນັກງານອາວຸໂສ, ຜູ້ມີຜົນງານໃນຂອບເຂດຂອງຕົນ ສະແດງຄວາມຜູກພັນສາມັກຄີ, ຄວາມມີສຳມາຄາລະວະ ແລະ ຄວາມກະຕັນຍູຮູ້ບຸນຄຸນພໍ່ແມ່ ແລະ ຜູ້ອາວຸໂສ; ບາງບ່ອນມີເງື່ອນໄຂ ກໍໃຫ້ແຂ່ງຂັນການຕີບພະທາດຊາຍ.

2. **ການຈັດງານສະເຫຼີມສະຫຼອງປີໃໝ່ລາວ ດ້ວຍການເລືອກກິດຈະກຳຂອງລວມໝູ່ ຫຼື ຄອບຄົວ <u>ບົນຈິດໃຈປະຢັດມັດທະຍັດ(ບໍ່ຟູມເຟືອຍ), ບໍ່ນຳໃຊ້ພາຫະນະຂອງລັດ ໄປເຄື່ອນໄຫວທ່ຽວຫຼິ້ນ ແລະ ບໍ່</u>**

ນຳໃຊ້ງົບປະມານຂອງລັດ ຈັດງານລ້ຽງ, ບໍ່ອວຍພອນກັນດ້ວຍວັດຖຸທີ່ມີຄ່າ, ການນຳໃຊ້ດອກໄມ້ພໍດ້າມພໍດີ ແລະ ເປັນດອກໄມ້ຂອງປະຊາຊົນປູກເອງ.

3. ຍ້ອນເວລາພັກແກ່ຍາວຫຼາຍວັນ ຈຶ່ງໃຫ້ເອົາໃຈໃສ່ເປັນພິເສດ ຕໍ່ການຮັກສາຄວາມສະຫງົບ, ຄວາມເປັນລະບຽບຮຽບຮ້ອຍໃນສັງຄົມ, ປ້ອງກັນອັກຄີໄພໃນຂອບເຂດຂອງຕົນ ແລະ ເພີ່ມຄວາມເຂັ້ມງວດໃນການຈັດສັນເສັ້ນທາງສັນຈອນໄປມາ, ຫ້າມບໍ່ໃຫ້ມີການດື່ມສິ່ງມຶນເມົາແລ້ວຂັບຂີ່ພາຫະນະ ເພື່ອຈຳກັດສຸດຂີດ ຕໍ່ອຸປະຕິເຫດບົນທ້ອງຖະໜົນ ທີ່ອາດເກີດຂຶ້ນ ; ພ້ອມກັນນັ້ນ ກໍໃຫ້ມີການຈັດຕັ້ງຜູ່ປະຈຳການ, ມີການເວນຍາມຢູ່ຕາມບ້ານ, ສຳນັກງານ-ອົງການຕ່າງໆຂອງຕົນ ຕະຫຼອດໄລຍະບຸນປີໃໝ່ລາວ ແລະ ໃຫ້ສາມາດຕິດຕໍ່ພົວພັນກັນໄດ້ຢ່າງເປັນປົກກະຕິທຸກເວລາ.

4. ມອບໃຫ້ທ່ານລັດຖະມົນຕີວ່າການ ກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ; ທ່ານເຈົ້າຄອງນະຄອນຫຼວງວຽງຈັນ ແລະ ບັນດາທ່ານເຈົ້າແຂວງ ເພີ່ມທະວີການປະຊາສຳພັນ ໃຫ້ປະຊາຊົນໃນທົ່ວສັງຄົມ ຮັບຮູ້ ແລະ ເຂົ້າໃຈຕໍ່ຈິດໃຈການສະເຫຼີມສະຫຼອງບຸນປີໃໝ່ປະຈຳຊາດ ໃຫ້ແທດເໝາະກັບສະພາບເງື່ອນໄຂ ແລະ ກາຍເປັນເອກະລັກທາງດ້ານວັດທະນະທຳຂອງຊາດ ຢ່າງກວ້າງຂວາງ.”

ດັ່ງນັ້ນ, ຈຶ່ງແຈ້ງມາຍັງທ່ານ ເພື່ອຊາບ ແລະ ຈັດຕັ້ງປະຕິບັດ ຕາມລະບຽບການຜ່ານມາ ແລະ ຈິດໃຈການຊີ້ນຳຂອງທ່ານນາຍົກລັດຖະມົນຕີ ໃນແຈ້ງການນີ້ດ້ວຍ.

ລັດຖະມົນຕີ, ຫົວໜ້າຫ້ອງວ່າການລັດຖະບານ

ດຣ. ສິນລະວົງ ຄຸດໄພທູນ

**ບ່ອນນຳສົ່ງ:**

| | |
|---|---|
| - ນາຍົກ-ຮອງນາຍົກລັດຖະມົນຕີ | 05 ສະບັບ |
| - ຫ້ອງວ່າການສູນກາງພັກ | 01 ສະບັບ |
| - ຫ້ອງວ່າການສະພາແຫ່ງຊາດ | 01 ສະບັບ |
| - ສູນກາງແນວລາວສ້າງຊາດ | 01 ສະບັບ |
| - ອົງການຕຸລາການ | 02 ສະບັບ |
| - ເກັບມ້ຽນ | 08 ສະບັບ |